# ບົດຮຽນໂຮງຮຽນວັນອາທິດ
# ວັນອາທິດທີ 25 ທັນວາ 2016 (12-25-2016)

---

## ພຣະຄຳທີ່ມີຊີວິດຂອງພຣະເຈົ້າຊ່ອຍ ເຮົາໃຫ້ພົ້ນ

**ຈຸດສຳຄັນໃນບົດຮຽນ**: ອົງພຣະເຢຊູເປັນພຣະທັມຂອງພຣະເຈົ້າຜູ້ນຳເອົາຄວາມລອດພົ້ນມາໃຫ້ພວກເຮົາ.

**ຂໍ້ພຣະຄັມພີໃນບົດຮຽນ**: ເພງສັຣເສີນ 119:41; ລູກາ 1:31-33, 34-35

**ພຣະຄັມພີຕອບສນອງຕໍ່ຊີວິດ**:

ທ່ານເຄີຍໄດ້ຮູ້ຈັກຄົນມີຊື່ສຽງດີບໍ່?

- ໄປທາງຫລັງເວທີເພື່ອໄປພົບກັບຄະນະດົນຕຣີ.
- ຈັບມືກັບນັກການເມືອງໃນທີ່ຊຸມນຸມຫາສຽງ.
- ພົບກັບນັກກິລາທີ່ມີຊື່ສຽງທີ່ເດັ່ນຍິນ.

ຖ້າທ່ານມີເພື່ອນໄດ້ພົບກັບຄົນດັງ ພວກເຂົາຍ່ອມບອກທ່ານທັນທີ! ມັນອາດຈະເປັນການລຳຄານໃຈເມື່ອຄົນບອກທ່ານດັ່ງນັ້ນ ເພາະທ່ານບໍ່ໄດ້ສົນໃຈໃນເຣື່ອງນັ້ນ.

ຢ່າງໃດກຕາມ, ຈະເຫັນວ່າມີຄວາມແຕກຕ່າງເມື່ອເຮົາໄດ້ພົບກັບອົງພຣະເຢຊູ ເພາະພຣະອົງບໍ່ເປັນດາຣາທີ່ມີຊື່ສຽງ ແຕ່ພຣະອົງຊົງເປັນພຣະເຈົ້າເໜືອພຣະທັງຫລາຍ ແລະຊົງເປັນຈອມກະສັດເໜືອກະສັດທັງຫລາຍໃນໂລກນີ້. ຄົນມັກເວົ້າເຖິງຜູ້ມີຊື່ສຽງດ້ວຍຄວາມອວດຕົວ ແຕ່ເມື່ອພົບກັບອົງພຣະເຢຊູແມ່ນການກະທຳຢ່າງຮູ້ພຣະຄຸນ ເພາະທຸກຄົນມີໂອກາດທີ່ຈະໄດ້ຮູ້ຈັກພຣະອົງ ແລະຕິດຕາມພຣະອົງ.

ໃນບົດຮຽນຕອນນີ້ ພວກເຮົາຈະໄດ້ເຫັນຄຳສອນສອງຢ່າງທີ່ບອກພວກເຮົາເຖິງເຫດຜົນວ່າເປັນຫຍັງພວກເຮົາຈຳເປັນຕ້ອງບອກຄົນອື່ນເຖິງຂ່າວປະເສີດເຣື່ອງຂອງອົງພຣະເຢຊູ.

**ພຣະຄັມພີກ່າວວ່າແນວໃດ? (** ເບິ່ງຕາມຫົວຂໍ້ 1, 2 ແລະ 3 )

### ສຶກສາພຣະຄັມພີ

**1. <u>ເພງສັຣເສີນ 119:41</u>**:

*41 ຂ້າແດ່ພຣະເຈົ້າ ຂໍຄວາມຮັກໝັ້ນຄົງຂອງພຣະອົງມາເຖິງຂ້ານ້ອຍ ຄືຄວາມລອດພົ້ນຂອງພຣະອົງຕາມພຣະສັນຍາຂອງພຣະອົງ.*

ຄຳເວົ້າວ່າ "ຄວາມຮັກໝັ້ນຄົງ" ໃຊ້ໃນຂໍ້ນີ້ແມ່ນຄຳສັນຍາເຖິງຄວາມຮັກຂອງພຣະເຈົ້າ ຄືແມ່ນຄວາມຮັກອັນສູງສຸດ, ເປັນຄວາມຮັກອັມມະຕະ, ບໍ່ປ່ຽນແປງ ແລະບໍ່ສິ້ນສຸດ. ນັກປະພັນເພງສັຣເສີນຮູ້ດີວ່າເພິ່ນບໍ່ຖືກບັງຄັບໃຫ້ເອົາຄວາມຮັກຢ່າງນີ້; ເພິ່ນພຽງອ້ອນວອນໃຫ້ຄວາມຮັກຊຶ່ງເປັນພຣະພອນເຂົ້າມາໃນຊີວິດ.

ປະໂຍກຕໍ່ໄປໄດ້ເວົ້າເຖິງຄວາມປາຖນາຂອງນັກປະພັນເພງສັຣເສີນວ່າຍ້ອນເຫດຜົນອັນໃດເພິ່ນຈຶ່ງຕ້ອງການຄວາມຮັກຂອງພຣະເຈົ້າເໜືອທຸກຢ່າງ: ຄວາມລອດພົ້ນ. ໃນພຣະຄັມພີໃໝ່ເມື່ອເວົ້າເຖິງຄວາມລອດພົ້ນມີຄວາມໝາຍສະເພາະເຈາະຈົງ ແຕ່ໃນພຣະຄັມພີເດີມຄຳວ່າລອດພົ້ນແມ່ນໃຊ້ທົ່ວໄປເໝືອນກັບຊ່ອຍຄົນໃຫ້ພົ້ນຈາກບັນຫາຫລືຄວາມທຸກຍາກ. ໃນນີ້ນັກປະພັນເພງສັຣເສີນອ້ອນວອນຢາກໃຫ້ພຣະເຈົ້າຊ່ອຍໃຫ້ພົ້ນຈາກສະຖານະການອັນລຳບາກ ເພາະເພິ່ນມີຄວາມຮັກຕໍ່ພຣະເຈົ້າແລະເຊື່ອວ່າພຣະອົງຈະຊ່ອຍໄດ້. ເພິ່ນອາດບໍ່ຫວັງການອັສຈັນແລະໃຫ້ສິ່ງແປກໆເກີດຂຶ້ນ ເພິ່ນພຽງອ້ອນວອນໃຫ້ພຣະເຈົ້າຊ່ອຍອີງຕາມຄວາມຈົງຮັກພັກດີທີ່ເພິ່ນມີຕໍ່ພຣະເຈົ້າແລະອີງຕາມຄຳສັນຍາຈາກພຣະເຈົ້າວ່າພຣະອົງຈະຊ່ອຍ.

ໃນສມັຍພຣະຄັມພີໃໝ່ ພວກເຮົາໄດ້ເຫັນຄຳສັນຍາຂອງພຣະເຈົ້າເຖິງຄວາມລອດພົ້ນຜ່ານທາງພຣະທັມຄືອົງພຣະເຢຊູຄຣິດ. ພຣະທັມສອນວ່າຄົນບາບສາມາດໄດ້ຮັບຄວາມລອດພົ້ນຈາກການລົງໂທດອັນຕລອດໄປ ເພາະພວກເຂົາໄດ້ເຊື່ອໃນອົງພຣະເຢຊູຄຣິດ. ໂຢຮັນຈຶ່ງໄດ້ຂຽນວ່າ, "ເພາະວ່າພຣະເຈົ້າຊົງຮັກໂລກຈົນໄດ້ປະທານພຣະບຸດອົງດຽວຂອງພຣະອົງ ເພື່ອທຸກຄົນທີ່ວາງໃຈເຊື່ອໃນພຣະບຸດນັ້ນຈະບໍ່ຈິບຫາຍ ແຕ່ຈະມີຊີວິດອັນຕລອດໄປເປັນນິດ" (ໂຢຮັນ 3:16). ນີ້ແຫລະແມ່ນພຣະທັມຂອງພຣະເຈົ້າໄດ້ກ່າວເອົາໄວ້.

ມັນເປັນສິ່ງສຳຄັນທີ່ສຸດທີ່ພວກເຮົາເຂົ້າໃຈເຖິງຄວາມຈິງນີ້: ພຣະຄັມພີໄດ້ແນໃສ່ອົງພຣະເຢຊູເປັນຄຳຕອບຂອງການລອດພົ້ນ (ເບິ່ງ ລູກາ 24:27). ເປັນຄວາມຈິງທີ່ພຣະຄັມພີໄດ້ເວົ້າເຖິງອົງພຣະເຢຊູຄຣິດ ຜູ້ເຮັດໃຫ້ສວັນຊົມຊື່ນແລະນ**ະຣົກ**ກັງວົນໃຈ ແລະເປັນທາງໃຫ້ມະນຸດຊາດອອກຈາກຄວາມຜິດບາບແລະຄວາມຕາຍ ຈຶ່ງໄດ້ເຂົ້າໄປໃນພຣະພັກຂອງພຣະເຈົ້າ.

| |
|---|
| *ເມື່ອທ່ານໄດ້ຍິນຄຳວ່າ "ຄວາມພົ້ນ" ທ່ານມີຄວາມຄິດເຫັນຢ່າງໃດ?* |

## 2. <u>ລູກາ 1</u>:30-33:

*30ແລ້ວເທວະດາໄດ້ກ່າວກັບນາງວ່າ, "ມາຣີອາເອີຍ, ຢ່າຊູ່ຢ້ານ ເພາະວ່າເຈົ້າເປັນທີ່ຊົງພຣະກະຣຸນາໂຜດແລ້ວ*
*31ເບິ່ງແມ, ເຈົ້າຈະມີທ້ອງແລະປະສູດບຸດຊາຍ ຈົ່ງຕັ້ງຊື່ບຸດນັ້ນວ່າ ເຢຊູ 32ບຸດນັ້ນຈະໄດ້ເປັນໃຫຍ່ ແລະຈະຊົງເອີ້ນວ່າ*
*ພຣະບຸດຂອງຜູ້ສູງສຸດ ອົງພຣະຜູ້ເປັນເຈົ້າຊົງປະທານພຣະທີ່ນັ່ງຂອງກະສັດດາວິດ ຜູ້ເປັນບັນພະບຸຣຸດຂອງທ່ານ ໃຫ້*
*ແກ່ທ່ານ 33ແລະທ່ານຈະສເວີຍຣາດຄຸ້ມຄອງເຊື້ອສາຍຂອງຢາໂຄບສືບໆໄປເປັນນິດ ແລະຣາຊອານາຈັກຂອງທ່ານ*
*ຈະບໍ່ຮູ້ສິ້ນສຸດ"*

ເປັນເວລາຫລາຍຮ້ອຍປີຫລັງຈາກນັກປະພັນເພງສັຣເສີນໄດ້ຂຽນເພງສັຣເສີນບົດທີ 119 ພຣະເຈົ້າໄດ້ປ່ຽນຊີວິດຂອງຍິງສາວຄົນນຶ່ງ. ຍິງຄົນນີ້ເປັນຍິງພົມມະຈາຣີຈະເກີດລູກຊາຍ ຜູ້ເປັນພຣະຜູ້ໂຜດໃຫ້ພົ້ນຂອງໂລກ. ໃນປຶ້ມລູກາບົດ 1 ມີເທວະດາຄັບຣີເອັນໄດ້ໄປບອກນາງມາຣີອາເຖິງແຜນການຂອງພຣະເຈົ້າແລະໜ້າທີ່ຂອງນາງທີ່ຈະເຮັດ.

ເທວະດາໄດ້ກ່າວຕໍ່ນາງມາຣີອາຢ່າງແຈ່ມແຈ້ງວ່າ ລູກຊາຍຂອງນາງຈະເປັນພຣະບຸດຂອງພຣະເຈົ້າອົງຊົງພຣະຊົນຢູ່. ໃນທີ່ສຸດອົງພຣະເຢຊູມາບັງເກີດໃນຖ້າມກາງພວກເຮົາ ພຣະອົງມາບັງເກີດເປັນເໝືອນມະນຸດແລະຕາຍເໝືອນຄົນທົ່ວໄປ.

ເຮັບເຣີ 4:15 ໄດ້ກ່າວຢ່າງແຈ່ມແຈ້ງວ່າ: "ເພາະວ່າເຮົາບໍ່ມີມະຫາປະໂຣຫິດທີ່ຈະເຫັນໃຈໃນຄວາມອ່ອນແອຂອງພວກເຮົາ ແຕ່ມີຕົນນຶ່ງຊົງຖືກທົດລອງເໝືອນພວກເຮົາທຸກປະການ ເຖິງປານນັ້ນພຣະອົງກໍຍັງບໍ່ມີບາບ" ອົງພຣະເຢຊູຮູ້ຈັກທຸກຢ່າງໃນຊີວິດຂອງພວກເຮົາ ດັ່ງນັ້ນ, ພຣະອົງສາມາດຊ່ອຍໄດ້ໃນຍາມພວກເຮົາມີຊີວິດລຳບາບ ແຕ່ພຣະອົງ

ບໍ່ເຄີຍເຮັດຄວາມບາບຈັກຢ່າງ.

ອົງພຣະເຢຊູມີຊີວິດເໝືອນພວກເຮົາທຸກປະການ ນອກຈາກຄວາມຜິດບາບ. ຖ້າພຣະອົງເຮັດບາບ ພຣະອົງກໍບໍ່ເປັນພຣະຜູ້ຊ່ອຍໃຫ້ລອດໄດ້. ອົງພຣະເຢຊູມີຊີວິດປະເສີດປາສຈາຄວາມຜິດບາບໃດໆທັງສິ້ນ ແລະພຣະອົງເປັນອົງພຣະຜູ້ຊ່ອຍແຕ່ອົງດຽວຕໍ່ພຣະພັກຂອງພຣະເຈົ້າ. ອາຈານໂປໂລໄດ້ຂຽນໄວ້ວ່າ, “ເພາະວ່າພຣະເຈົ້າໄດ້ກະທຳໃຫ້ພຣະຄຣິດຜູ້ຊຶ່ງບໍ່ມີຄວາມຜິດບາບນັ້ນ ໄດ້ເຂົ້າຮ່ວມໃນຄວາມຜິດບາບຂອງພວກເຮົາ ເພື່ອພວກເຮົາຈະໄດ້ເຂົ້າສ່ວນໃນຄວາມຊອບທັມຂອງພຣະເຈົ້າໂດຍທາງພຣະອົງ.” (2 ກຣທ 5:21).

ພຣະບຸດຂອງພຣະເຈົ້າກາຍເປັນມະນຸດເພື່ອພຣະອົງຈະໄດ້ເປັນຜູ້ແທນພວກເຮົາຕໍ່ພຣະພັກຂອງພຣະເຈົ້າ.“ດ້ວຍເຫດວ່າມີພຣະເຈົ້າອົງດຽວ ແລະຜູ້ກາງແຕ່ຜູ້ດຽວລະຫວ່າງພຣະເຈົ້າກັບມະນຸດ ຄືພຣະເຢຊູຄຣິດຜູ້ຊຶ່ງສະພາບເປັນປະມຸກ ຜູ້ໄດ້ຊົງສລະພຣະອົງເອງເປັນຄ່າໄຖ່ສຳລັບຄົນທັງປວງ ຊຶ່ງການນີ້ເປັນພະຍານໃນເວລາເໝາະສົມ.” (1 ຕມທ 2:5-6). ເພາະສະພາບພິເສດຂອງອົງພຣະເຢຊູ, ຄວາມພົ້ນຈຶ່ງບໍ່ມີໃນຜູ້ອື່ນ (ເບິ່ງ ກຈກ 4:12). ອົງພຣະເຢຊູເອງກໍໄດ້ປະກາດວ່າ: “ເຮົານີ້ແຫລະເປັນທາງນັ້ນ, ເປັນຄວາມຈິງ, ແລະເປັນຊີວິດ ບໍ່ມີຜູ້ໃດໄປເຖິງພຣະບິດາໄດ້ນອກຈາກມາທາງເຮົາ.” (ໂຢຮັນ 14:6). ພຣະສັນຍາຂອງພຣະເຈົ້າໄດ້ກາຍເປັນຈິງເຖິງເຣື່ອງຄວາມພົ້ນ ເມື່ອອົງພຣະເຢຊູໄດ້ມາບັງເກີດກັບຍິງພົມມະຈາຣີ.

| |
|---|
| *ເປັນຫຍັງຈຶ່ງເຫັນວ່າສຳຄັນ ທີ່ພຣະເຢຊູຊົງເປັນມະນຸດຢ່າງສົມບູນ?*<br>*ເປັນຫຍັງຈຶ່ງເຫັນວ່າສຳຄັນ ທີ່ພຣະເຢຊູຊົງເປັນພຣະເຈົ້າຢ່າງສົມບູນ?* |

**3. <u>ລູກາ 1:34-35</u>:**

*[34]ຝ່າຍມາຣີອາຈຶ່ງທູນເທວະດານັ້ນວ່າ, “ເຫດການນີ້ຈະເປັນໄປໄດ້ຢ່າງໃດ ເພາະຂ້ານ້ອຍຍັງບໍ່ທັນໄດ້ຮ່ວມຮູ້ກັບຊາຍຈັກເທື່ອ” [35]ເທວະດາໄດ້ຕອບນາງວ່າ, “ພຣະວິນຍານບໍຣິສຸດຈະສະເດັດລົງມາເຖິງເຈົ້າ ແລະຣິດເດດຂອງຜູ້ສູງສຸດຈະປົກຄຸມເຈົ້າໄວ້ ເຫດສັນນີ້ບຸດທີ່ຈະເກີດມານັ້ນຈະໄດ້ເອີ້ນວ່າບໍຣິສຸດ ຄືພຣະບຸດຂອງພຣະເຈົ້າ.*

ເມື່ອເທວະດາ ຄັບຣີເອັນໄດ້ປະກາດເຣື່ອງພຣະປະສູດຂອງອົງພຣະເຢຊູກັບນາງມາຣີອາ ທີແລກນາງກໍສັບສົນໃນໃຈຫລາຍ ເພາະນາງເປັນຍິງສາວປອດ ນາງຈຶ່ງຖາມວ່າ “ເຣື່ອງນີ້ຈະເປັນໄປໄດ້ຢ່າງໃດ ເພາະຍັງບໍ່ໄດ້ສົມສູ່ກັບຊາຍຄົນໃດ?” ນາງບໍ່ໄດ້ສົງສັຍຕໍ່ຄຳສັນຍາຈາກພຣະເຈົ້າ ແຕ່ນາງບໍ່ສາມາດເຂົ້າໃຈສິ່ງທີ່ໄດ້ຍິນດ້ວຍຫູວ່າຈະເປັນໄປ. ເທວະດາໄດ້ອະທິບາຍຂໍ້ຄວາມຈິງແລະສຳຄັນໃນຂໍ້ 35; ພຣະອົງຈະເຮັດໃຫ້ສິ່ງນີ້ສຳເຣັດດ້ວຍຣິດເດດຂອງພຣະອົງເອງ.

ແນ່ນອນພຣະກຳເນີດຂອງເດັກຜູ້ເກີດຈາກນາງມາຣີອາບໍ່ແມ່ນການເກີດທັມມະດາ. ນາງຈະໄດ້ຕັ້ງຄັນໂດຍຣິດອຳນາດຂອງອົງພຣະວິນຍານບໍຣິສຸດ ແລະຣິດເດດຂອງພຣະເຈົ້າອົງສູງສຸດ. ເດັກນັ້ນຈະຖືກເອີ້ນວ່າເປັນບຸດຂອງພຣະເຈົ້າ ເພາະພຣະອົງມາບັງເກີດເປັນເນື້ອໜັງ. ສລູບແລ້ວ ອົງພຣະເຢຊູເປັນພຣະເຈົ້າໃນເນື້ອໜັງ.

ພຣະກຳເນີດຂອງອົງພຣະເຢຊູນີ້ເປັນຄວາມຈິງ ພຣະອົງບໍ່ເປັນຄົນທັມມະດາ: ພຣະເຢຊູບໍ່ແມ່ນຜູ້ຫລອກລວງທີ່ຕັ້ງໃຈຫລອກລວງປະຊາຊົນຫລືບໍ່ແມ່ນຄົນເປັນບ້າທີ່ເວົ້າວ່າພຣະອົງແມ່ນພຣະເຈົ້າຂອງຄົນທັງປວງ. ພຣະອົງນີ້ແຫລະທີ່ພວກເຮົາປະກາດວ່າ; ພຣະເຢຊູຜູ້ຊົງເປັນພຣະເຈົ້າບໍຣິບູນ ແລະເປັນມະນຸດບໍຣິບູນໃນເວລາດຽວກັນ.

- ເປັນຜູ້ທີ່ນອນຫລັບຢູ່ທ້າຍເຮືອໃນທະເລຄາລີເລ ເວລາລົມພະຍຸພັດມາພຣະອົງເປັນຜູ້ສັ່ງໃຫ້ມັນຢຸດ (ເບິ່ງ ມຣກ 4:35-41).

- ເປັນແຂກພິເສດຜູ້ຖືກເຊີນໄປໃນງານແຕ່ງງານ ເວລານັ້ນພຣະອົງໄດ້ເຮັດນ້ຳໃຫ້ເປັນເຫລົ້າອະງຸ່ນຊັ້ນດີ (ເບິ່ງ ໂຢຮັນ 2:1-11).
- ເປັນຜູ້ຮ້ອງໄຫ້ທີ່ອຸບໂມງຂອງຮາຊາໂລ, ແລະເປັນຜູ້ເອີ້ນເອົາຮາຊາໂລໃຫ້ເປັນຄືນມາຈາກຄວາມຕາຍ (ເບິ່ງ ໂຢຮັນ 11:1-44).

ອົງພຣະເຢຊູເປັນຜູ້ສຳຄັນກວ່າຕຸກກະຕາເດັກນ້ອຍທີ່ເຮົາເອົາມາສລອງໃນວັນຄຣິສມາດ. ພຣະອົງເປັນມະນຸດແລະພຣະເຈົ້າໃນເວລາດຽວກັນ ພຣະອົງໄດ້ນຳເອົາຄວາມລອດພົ້ນມາສູ່ມະນຸດເຮົາຊຶ່ງໄດ້ທຳນວາຍໄວ້ໃນພຣະຄັມພີເດີມ. ຄວາມລອດພົ້ນນີ້ບໍ່ແມ່ນຍ້ອນຄວາມດີຫລືການປະຕິບັດຂອງຄົນນຶ່ງຄົນໃດເຮັດເອົາເອງ; ແຕ່ເປັນພາຣະກິດທີ່ສຳເຣັດຂອງພຣະເຈົ້າ ເປັນຂອງຂວັນຈາກພຣະເຈົ້າສຳລັບພວກເຮົາ. "ຄວາມພົ້ນນັ້ນມາດ້ວຍພຣະຄຸນທາງຄວາມເຊື່ອ, ສິ່ງເຫລົ່ານີ້ບໍ່ແມ່ນພວກທ່ານເຮັດເອົາເອງ ແຕ່ພຣະເຈົ້າຊົງປະທານໃຫ້." (ອຟຊ 2:8).

ເບິ່ງຄືນໃນຄຳອ້ອນວອນໃນເພງສັຣເສີນບົດ 119:41-"ຂ້າແດ່ພຣະເຈົ້າ ຂໍຄວາມຮັກໝັ້ນຄົງຂອງພຣະອົງມາເຖິງຂ້ານ້ອຍ ຄືຄວາມລອດພົ້ນຂອງພຣະອົງຕາມຄຳສັນຍາຂອງພຣະອົງ." ຄວາມຍິ່ງໃຫຍ່ແລະສັດຊື່ຂອງພຣະເຈົ້າມາເຖິງພວກເຮົາໂດຍທາງພຣະກຳເນີດຂອງອົງພຣະເຢຊູບໍ່? ເປັນພຣະພອນອັນລ້ຳຄ່າທີ່ໄດ້ຮູ້ຈັກວ່າອົງພຣະເຢຊູໄດ້ນຳເອົາພຣະສັນຍາຂອງພຣະເຈົ້າມາເຖິງພວກເຮົາຄື ຄວາມລອດພົ້ນ.

| |
|---|
| *ຄຳຖາມທີ່ວ່າ "ພຣະເຢຊູແມ່ນຜູ້ໃດ?" ທ່ານເອງມີຄວາມເຂົ້າໃຈຢ່າງໃດ?* |

## ນຳໃຊ້ໃນຊີວິດ

ທ່ານຈະມີວິທີເຮັດຢ່າງໃດເພື່ອເຮັດໃຫ້ອົງພຣະເຢຊູທຳງານໃນຊີວິດຂອງທ່ານໃນອາທິດນີ້? ໃຫ້ພິຈາຣະນາຂໍ້ແນະນຳດັ່ງຕໍ່ລົງໄປນີ້:

- **ຮັບເອົາຂອງຂວັນ**. ອົງພຣະເຢຊູສະເດັດມາໃນໂລກເພື່ອຈະປະທານຊີວິດແກ່ທ່ານ. ຈົ່ງເຊື່ອຟັງແລະໄວ້ວາງໃຈໃນຄວາມຈິງນັ້ນ.

- **ດຳລົງຊີວິດດ້ວຍຂອງຂວັນ.** ຊີວິດໃນອົງພຣະເຢຊູຄຣິດເປັນຊີວິດມີການປ່ຽນແປງ. ອ້ອນວອນເປັນປະຈຳເພື່ອທ່ານຈະມີຊີວິດເໜືອພຣະອົງແຕ່ລະວັນ. ໃຫ້ກ້າວໄປອີກກ້າວນຶ່ງເພື່ອທ່ານຈະໄດ້ເຊື່ອຟັງພຣະທັມຂອງພຣະອົງຫລາຍຂຶ້ນ.

- **ປະກາດເຣື່ອງຂອງຂວັນ.** ມີຫລາຍຄົນຮູ້ເຣື່ອງພຣະກຳເນີດຂອງອົງພຣະເຢຊູພຽງແຕ່ເຜີນໆ. ຈົ່ງບອກຄົນເຫລົ່ານັ້ນເຖິງຄວາມສຳຄັນໃນພຣະກຳເນີດຂອງອົງພຣະເຢຊູຢ່າງແທ້ຈິງ ເປັນພຣະເຈົ້າທີ່ສະເດັດມາໃນໂລກເພື່ອຊ່ອຍພວກເຮົາ ແລະນຳພາເຂົາເຈົ້າໃຫ້ຮັບເອົາຂອງຂວັນຄືຄວາມລອດພົ້ນດ້ວຍທາງຄວາມເຊື່ອ.

ທ່ານບໍ່ຈຳເປັນມີບັດພິເສດເພື່ອໄປພົບກັບຄົນດັງຫລັງເວທີ. ທ່ານສາມາດພົບກັບອົງພຣະເຢຊູໄດ້ດ້ວຍຕົນເອງໜ້າຕໍ່ໜ້າ ຜູ້ເປັນພຣະຜູ້ໂຜດໃຫ້ພົ້ນຂອງໂລກ. ຢ່າໃຫ້ໂອກາດທີ່ດີນີ້ຜ່ານໄປລ້າໆ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ໂດຍ BV**